JDB ເປີດກອງປະຊຸມສະຫຼຸບຜົນດຳເນີນທຸລະກິດ ໄຕມາດ III ປະຈຳປີ 2026 ທະນາຄານຮ່ວມພັດທະນາ ມະຫາຊົນ











JDB ເປີດກອງປະຊຸມສະຫຼຸບຜົນດຳເນີນທຸລະກິດ ປະຈຳໄຕມາດ III ປີ 2026 ແລະ ທິດທາງການດຳເນີນທຸລະກິດ ໄຕມາດ IV ປີ 2026.

ໃນຕອນບ່າຍ ວັນທີ 9 ຕຸລາ 2026, ທະນາຄານຮ່ວມພັດທະນາ ມະຫາຊົນ ຫຼື JDB ໄດ້ເປີດກອງປະຊຸມສະຫຼຸບຜົນການດຳເນີນທຸລະກິດ 09 ເດືອນຜ່ານມາ ແລະ ທິດທາງການດຳເນີນທຸລະກິດ 03 ເດືອນ ທ້າຍປີ 2026, ທີ່ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ ນະຄອນຫຼວງວຽງຈັນ.

ພາຍໃຕ້ການເປັນປະທານກອງປະຊຸມຂອງ ທ່ານ ຄຳສິງ ສອນສິນນະວົງ ຮອງປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ, ພ້ອມດ້ວຍຄະນະຜູ້ບໍລິຫານ, ຄະນະພະແນກ ແລະ ໜ່ວຍບໍລິການ ພາຍໃນນະຄອນຫຼວງວຽງຈັນ. ນອກຈາກນີ້, ຍັງມີບັນດາໜ່ວຍບໍລິການຕ່າງແຂວງ ເຂົ້າຮ່ວມກອງປະຊຸມຜ່ານລະບົບ Video Conference. ເຊິ່ງເປັນກຽດກ່າວເປີດກອງປະຊຸມຢ່າງເປັນທາງການໂດຍ ທ່ານ ນາງ ຄອນສະຫວັນ ວິຊາ ເທບ, ຜູ້ອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ.

ກອງປະຊຸມໄດ້ມີການຮັບຟັງການລາຍງານເຖິງຜົນສຳເລັດວຽກງານຫຼາຍໆດ້ານ, ໃນໄຕມາດ III ຂອງປີ 2026 ທີ່ຜ່ານມາ ໂດຍ JDB ສາມາດສ້າງຍອດຊັບສິນລວມ ປະຕິບັດໄດ້ 81% ຂອງແຜນປີ 2026 ເຊິ່ງ JDB ເປັນ 1 ໃນ 3 ທະນາຄານທີ່ມີຍອດຊັບສິນລວມສູງທີ່ສຸດ ຂອງທະນາຄານທຸລະກິດໃນ ສປປ ລາວ, ການສະໜອງສິນເຊື່ອ ປະຕິບັດໄດ້ 83% ເມື່ອທຽບໃສ່ແຜນປີ 2026, ດ້ານຜົນການດຳເນີນທຸລະກິດ ມາເຖິງໄຕມາດ III ຂອງ JDB ສາມາດສ້າງລາຍຮັບລວມເມື່ອທຽບໃສ່ແຜນປີ 2026 ສາມາດປະຕິບັດໄດ້ 85%, ສ້າງກຳໄລກ່ອນຫັກອາກອນສາມາດປະຕິບັດໄດ້ 645 ຕື້ກີບ ທຽບໃສ່ແຜນໄຕມາດ III ໃນ 9 ເດືອນຜ່ານມາ ໃນປີ 2026 ແມ່ນປະຕິບັດໄດ້ 71% , ແລະ ເມື່ອທຽບໃສ່ແຜນປີ 2026 ສາມາດປະຕິບັດໄດ້ 52%.

ຕົວເລກຜົນສຳເລັດອັນໂດດເດັ່ນນີ້ ບໍ່ພຽງແຕ່ສະແດງເຖິງການເຕີບໂຕຢ່າງຕໍ່ເນື່ອງ, ແຕ່ຍັງເປັນສິ່ງຢັ້ງຢືນເຖິງຄວາມໝັ້ນຄົງທາງດ້ານຖານະທາງການເງິນ ແລະ ຄວາມສາມາດໃນການບໍລິຫານຄວາມສ່ຽງທີ່ມີປະສິດທິພາບສູງ ພາຍໃຕ້ສະພາວະເສດຖະກິດທີ່ມີຄວາມຜັນຜວນ, ເຮັດໃຫ້ JDB ຍັງຄົງເປັນທະນາຄານທຸລະກິດຊັ້ນນຳ ທີ່ໄດ້ຮັບຄວາມໄວ້ວາງໃຈ ແລະ ມີສະພາບຄ່ອງທີ່ແຂງແຮງ ພ້ອມທີ່ຈະຮອງຮັບການບໍລິການລູກຄ້າໃນທຸກລະດັບຢ່າງມີສະຖຽນລະພາບ.

ໃນຕອນທ້າຍກອງປະຊຸມ ໄດ້ຮັບຟັງການໂອ້ລົມຈາກ ທ່ານ ຄຳສິງ ສອນສິນນະວົງ, ຮອງປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ, ໄດ້ຍ້ອງຍໍຊົມເຊີຍໃນໂອກາດຄົບຮອບ 37 ປີ ໃນການສ້າງຕັ້ງທະນາຄານ ແລະ ຊົມເຊີຍຜົນສຳເລັດການເຂົ້າໃນຕະຫຼາດຫຼັກຊັບ ລາວ ຄົບຮອບ 1 ປີ, ແລະ ທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ຜົນງານ 09 ເດືອນຜ່ານມາ ເຊິ່ງສາມາດຮັກສາສະຖຽນລະພາບທາງດ້ານການເງິນ ແລະ ການຂະຫຍາຍຕົວຢ່າງຕໍ່ເນື່ອງ ທ່າມກາງເສດຖະກິດ ທີ່ມີຄວາມທ້າທາຍ, ແຕ່ພະນັກງານຂອງທະນາຄານຮ່ວມພັດທະນາ ມະຫາຊົນ ເປັນມືອາຊີບ ການບໍລິການທີ່ເປັນເລີດ, ວ່ອງໄວ ແລະ ທັນສະໄໝ ເຊື່ອມຕໍ່ກັບສາກົນ ຖືເອົາຄວາມຕ້ອງການຂອງລູກຄ້າເປັນຫຼັກ, ພັດທະນາຜະລິດຕະພັນທາງການເງິນ ໃຫ້ມີຄວາມທັນສະໄໝ ສ້າງຜົນປະໂຫຍດສູງສຸດໃຫ້ກັບທຸກຝ່າຍ ເປັນສ່ວນສຳຄັນໃນການພັດທະນາປະເທດຊາດ ໃຫ້ຈະເລີນຮຸ່ງເຮືອງ ແລະ ຢ່າງມີສະຖຽນລະພາບ.

ທະນາຄານຮ່ວມພັດທະນາ ມະຫາຊົນ **“ເຕີບໃຫຍ່ໄປພ້ອມກັນ”**